ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 062 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.01.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ ( ສະບັບປັບປຸງ )

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 022 / ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 014 /ຄປຈ, ລົງວັນທີ 23/01/2014.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 022 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ມໍລະດົກແຫ່ງຊາດ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ມໍລະດົກແຫ່ງຊາດ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 24 ທັນວາ 2013

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ມໍລະດົກແຫ່ງຊາດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2013

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ ເລກທີ 44 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2013

# ກົດໝາຍ

# ວ່າດ້ວຍ ມໍຣະດົກແຫ່ງຊາດ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນມໍຣະດົກແຫ່ງຊາດ ເພື່ອຮັກສາໄວ້ ຊຶ່ງຄຸນຄ່າຂອງມໍຣະດົກແຫ່ງຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແນໃສ່ສຶກສາອົບຮົມພົນລະເມືອງໃຫ້ມີນ້ຳໃຈຮັກຊາດ, ຮັກມູນເຊື້ອອັນດີງາມຂອງຊາດ, ເປັນປັດໄຈຄ້ຳປະກັນການຍືນຍົງຄົງຕົວຂອງຊາດລາວຕະຫຼອດໄປ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2(ປັບປຸງ) ມໍຣະດົກແຫ່ງຊາດ**

ມໍຣະດົກແຫ່ງຊາດ ແມ່ນ ຜະລິດຕະພັນທີ່ມະນຸດສ້າງຂຶ້ນ ຫຼື ສິ່ງທີ່ເກີດຂຶ້ນ ໂດຍທຳມະຊາດ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ເປັນຊັບສົມບັດອັນລ້ຳຄ່າ, ເປັນກຳມະສິດລວມຂອງວົງຄະນະຍາດແຫ່ງຊາດລາວ ຊຶ່ງມີມໍຣະດົກລະດັບທ້ອງຖິ່ນ, ລະດັບຊາດ ແລະ ອາດຖືກຮັບຮອງເປັນມໍຣະດົກພາກພື້ນ ຫຼື ມໍຣະດົກໂລກ.

ມໍຣະດົກແຫ່ງຊາດ ປະກອບດ້ວຍ ມໍຣະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ, ມີຊີວິດ ຫຼື ບໍ່ມີຊີວິດ ຊຶ່ງຢັ້ງຢືນເຖິງຄວາມເປັນມາຂອງຊາດລາວ, ຄົນລາວໃນແຕ່ລະຍຸກແຕ່ລະສະໄໝ.

ມໍຣະດົກແຫ່ງຊາດ ມີ ຢູ່ທັງ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3(ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ມໍຣະດົກແຫ່ງຊາດ ທາງດ້ານວັດທະນະທໍາ ແລະ ປະຫວັດສາດ** ໝາຍເຖິງ ມໍຣະດົກ ທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ມີຄຸນຄ່າສູງທາງດ້ານວັດທະນະທໍາ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ ທີ່ເປັນສົມບັດຂອງຊາດ, ໄດ້ຮັບການສືບທອດກັນມາແຕ່ລະຍຸກແຕ່ລະສະໄໝ;

2. **ມໍຣະດົກແຫ່ງຊາດ ທາງດ້ານທໍາມະຊາດ** ໝາຍເຖິງ ມໍຣະດົກທີ່ເກີດຂຶ້ນໂດຍທໍາມະຊາດ ທີ່ມີຊີວິດ ຫຼື ບໍ່ມີຊີວິດ ຊຶ່ງມີຄຸນຄ່າສູງທາງດ້ານທັດສະນີຍະພາບ ແລະ ຊີວະນາໆພັນ ທີ່ຍັງຄົງຄວາມສົມບູນທາງທໍາມະຊາດ ແລະ ຄວາມສວຍສົດງົດງາມ;

3. **ສົມບັດນິ້ງເມືອງ** ໝາຍເຖິງ ມໍຣະດົກຕົກທອດ ທີ່ມີຄຸນຄ່າສູງ, ໂດດເດັ່ນເປັນພິເສດທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດທີ່ຫາຍາກ ແລະ ເປັນເອກະລັກຂອງຊາດ ທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ;

4. **ຮ່ອງຮອຍປະຫວັດສາດ** ໝາຍເຖິງ ສະຖານທີ່, ສິ່ງກໍ່ສ້າງທາງດ້ານສະຖາປັດຕະຍະກໍາ, ບູຮານສະຖານ ຊຶ່ງມີວັດຖຸບູຮານ ທີ່ມີຄຸນຄ່າສູງທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ວິທະຍາສາດ;

5. **ວັດຖຸບູຮານ** ໝາຍເຖິງ ຜະລິດຕະພັນທາງດ້ານວັດຖຸ ທີ່ສ້າງຂຶ້ນໂດຍມະນຸດ ອັນເປັນຫຼັກຖານຢັ້ງຢືນ ເຖິງປະຫວັດສາດແຫ່ງຂະບວນວິວັດຂອງສັງຄົມມະນຸດ;

6. **ແຫຼ່ງວັດຖຸບູຮານ** ໝາຍເຖິງ ສະຖານທີ່ ຊຶ່ງວັດຖຸບູຮານ, ສະຖານບູຮານ ແລະ ບັນດາຮ່ອງຮອຍຫຼັກຖານທາງປະຫວັດສາດ ຖືກຄົ້ນພົບຢູ່ຮ່ວມກັນເປັນກຸ່ມ;

7. ວັດຖຸຈໍາລອງແບບ ໝາຍເຖິງ ວັດຖຸທີ່ສ້າງຂຶ້ນໃໝ່ ໂດຍການກ່າຍເອົາແບບວັດຖຸບູຮານ ຊຶ່ງມີລັກສະນະຮູບຊົງ, ສັດສ່ວນ, ສີສັນ, ລວດລາຍ, ການຕົບແຕ່ງ ແລະ ຈຸດພິເສດອື່ນ ຕາມແບບສະບັບເດີມ;

8. **ສະຖາປັດຕະຍະກໍາ** ໝາຍເຖິງ ສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານວັດທະນະທໍາ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດໍາລົງຊີວິດ ຂອງປະຊາຊົນບັນດາເຜົ່າ, ຂອງບັນພະບຸລຸດ ແລະ ວິລະບຸລຸດແຫ່ງຊາດ;

9. **ການປົກປັກຮັກສາມໍຣະດົກແຫ່ງຊາດ** ໝາຍເຖິງ ການປ້ອງກັນບໍ່ໃຫ້ຖືກລັກ, ທໍາລາຍ, ຈູດເຜົາ, ຖືກເສຍຫາຍຈາກທໍາມະຊາດ ຫຼື ຖືກເອົາໄປນໍາໃຊ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

10. **ການອະນຸລັກມໍຣະດົກແຫ່ງຊາດ** ໝາຍເຖິງ ການຮັກສາໄວ້ ຊຶ່ງຄຸນຄ່າ, ຮ່ອງຮອຍ, ສີສັນທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດຂອງມໍຣະດົກແຫ່ງຊາດ ເພື່ອບໍ່ໃຫ້ເສື່ອມໂຊມ ແລະ ສູນຫາຍ;

11. **ການບູລະນະມໍຣະດົກແຫ່ງຊາດ** ໝາຍເຖິງ ຂະບວນການສ້ອມແປງ, ຮັກສາຮູບແບບ, ລວດລາຍ ສິລະປະ ແລະ ລາຍລະອຽດເດີມຂອງອາຄານ, ສິ່ງກໍ່ສ້າງໃຫ້ຖືກຕ້ອງຕາມຍຸກສະໄໝທີ່ແນ່ນອນ ໂດຍຕໍ່ເຕີມ ແລະ ເສີມສ່ວນດັ້ງເດີມທີ່ຂາດຫາຍໄປໃຫ້ສົມບູນ;

12. **ການປະຕິສັງຂອນມໍລະດົກແຫ່ງຊາດ** ໝາຍເຖິງ ການບູລະນະສ້ອມແປງຄືນໃໝ່ ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານປະຫວັດສາດ, ວັດທະນະທໍາ, ທັດສະນີຍະພາບທໍາມະຊາດ ຄືນສູ່ສະພາບ ແລະ ເອກະລັກດັ້ງເດີມ;

13. **ມໍລະດົກສະຖານ** ໝາຍເຖິງ ບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທໍາມະຊາດ ແລະ ສະຖາປັດຕະຍະກໍາ ຊຶ່ງມີຄຸນຄ່າທາງດ້ານວັດທະນະທໍາ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ, ທັດສະນີຍະພາບທີ່ສືບທອດກັນມາ;

14. **ປູຊະນີຍະສະຖານ** ໝາຍເຖິງ ສະຖານທີ່ ຊຶ່ງເປັນບ່ອນເຄົາລົບບູຊາ ຂອງປະຊາຊົນທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ;

15. **ອະນຸສອນສະຖານ** ໝາຍເຖິງ ສະຖານທີ່ລະນຶກເຖິງວິລະກໍາຂອງບັນພະບຸລຸດ ແລະ ຂະບວນການຕໍ່ສູ້ອັນພິລະອາດຫານ ຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອຄວາມຊົງຈໍາຂອງອະນຸຊົນຄົນຮຸ່ນຫຼັງ;

16. **ຫໍພິພິທະພັນ** ໝາຍເຖິງ ສະຖານທີ່ເກັບມ້ຽນ, ອະນຸລັກຮັກສາ ແລະ ວາງສະແດງວັດຖຸພັນກ່ຽວກັບ ວັດທະນະທໍາ, ປະຫວັດສາດ, ທໍາມະຊາດ, ວິທະຍາສາດ ແລະ ສັງຄົມ ເພື່ອຮັບໃຊ້ການຄົ້ນຄວ້າ, ສຶກສາອົບຮົມ, ທັດສະນະສຶກສາ ແລະ ການທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ;

17. **ຊັບສິນບັດອັນລໍ້າຄ່າ** ໝາຍເຖິງ ຊັບສິນບັດທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ.

**ມາດຕາ 4(ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານມໍລະດົກແຫ່ງຊາດ**

ລັດ ສົ່ງເສີມ ການປົກປັກຮັກສາ ແລະ ອະນຸລັກ ມໍລະດົກ ໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນການສະໜອງຂໍ້ມູນຂ່າວສານ, ປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດ ເພື່ອໃຫ້ມີຄວາມຍືນຍົງ ຄົງຕົວ.

ລັດ ສົ່ງເສີມການຄົ້ນຄວ້າ, ການປະດິດແຕ່ງ, ການເຜີຍແຜ່ຄຸນຄ່າທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າຂອງມໍລະດົກແຫ່ງຊາດ ພ້ອມທັງຈໍາກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງ ຄວາມກ້າວໜ້າ ຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງປະເທດຊາດ.

ລັດ ຮັບຮູ້ ແລະ ປົກປ້ອງກໍາມະສິດ ກ່ຽວກັບມໍລະດົກແຫ່ງຊາດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນ ຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 5(ໃໝ່) ຫຼັກການພື້ນຖານກ່ຽວກັບວຽກງານມໍຣະດົກແຫ່ງຊາດ**

ການເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້ :

1. ການສຶກສາ, ສຳຫຼວດ, ຂຸດຄົ້ນ, ເກັບກູ້, ກອບກູ້, ຄົ້ນຄວ້າ, ວິໄຈ, ການປະດິດແຕ່ງ, ການໂຄສະນາເຜີຍແຜ່ ຕ້ອງຮັບປະກັນການຍືນຍົງ ຄົງຕົວຂອງຊາດ, ເປັນກຳລັງດັນ ໃນການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ;

2. ການຄຸ້ມຄອງ, ປົກປັກຮັກສາ ແລະ ອະນຸລັກມໍຣະດົກແຫ່ງຊາດ ຕ້ອງໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

3. ການບູລະນະປະຕິສັງຂອນມໍຣະດົກແຫ່ງຊາດ ຕ້ອງຮັບປະກັນລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ພ້ອມທັງຈຳກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງຄວາມກ້າວໜ້າ ຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງປະເທດຊາດ;

4. ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ຕ້ອງຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ການປົກປັກຮັກສາ, ອະນຸລັກ ແລະ ເສີມຂະຫຍາຍຄຸນຄ່າຂອງມໍຣະດົກແຫ່ງຊາດ ຕ້ອງໃຫ້ມີສ່ວນຮ່ວມຂອງປະຊາຊົນ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນເສດຖະກິດ.

**ມາດຕາ 6(ປັບປຸງ) ພັນທະຂອງພົນລະເມືອງ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ລ້ວນແຕ່ມີ ພັນທະໃນການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນ ມໍຣະດົກແຫ່ງຊາດ.

ຄົນຕ່າງປະເທດ, ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ລວມທັງຄົນລາວ ຢູ່ ຕ່າງປະເທດ ກໍມີພັນທະປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ອະນຸລັກ ມໍຣະດົກແຫ່ງຊາດ.

**ມາດຕາ 7(ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຢູ່ ສປປ ລາວ.

**ມາດຕາ 8(ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຄົ້ນຄວ້າວິທະຍາສາດ, ຝຶກອົບຮົມວິຊາການ, ເຜີຍແຜ່ວັດທະນະທຳ, ວາງສະແດງ, ຍາດແຍ່ງທຶນຮອນ, ປະຕິບັດ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດ ມໍລະດົກແຫ່ງຊາດ
## ໝວດທີ 1
## ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ

**ມາດຕາ 9 ປະເພດມໍລະດົກແຫ່ງຊາດທາງດ້ານວັດທະນະທຳ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ມີ ສອງ ປະເພດ ຄື:

1. ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸ;
2. ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ.

**ມາດຕາ 10(ປັບປຸງ) ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸ ແມ່ນ ມໍລະດົກ ທີ່ມີຕົວຕົນ, ເປັນຊັບສິນບັດອັນລ້ຳຄ່າ ທາງດ້ານວັດທະນະທຳ ຊຶ່ງມີ ສິ່ງທີ່ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ເປັນເອກະລັກ ເປັນຕົ້ນ ເຄື່ອງມືການຜະລິດ, ເຄື່ອງຫັດຖະກຳ, ເຄື່ອງອຸປະໂພກ, ບໍລິໂພກ, ວິຈິດຕະກຳ, ເຄື່ອງດົນຕີພື້ນເມືອງ, ສິ່ງຈາລຶກບູຮານ, ວັດຖຸບູຮານ, ບູຮານສະຖານ, ປູຊະນີຍະສະຖານ ແລະ ອື່ນໆ.

**ມາດຕາ 11 ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ ແມ່ນ ມໍລະດົກທີ່ບໍ່ມີຕົວຕົນ, ເປັນຊັບສິນບັດອັນລ້ຳຄ່າ ທາງດ້ານວັດທະນະທຳ ເຊັ່ນ ພູມປັນຍາ, ຄວາມຮູ້, ປັດຊະຍາຂອງມະຫາຊົນ, ຄວາມເຊື່ອຖື, ຮີດຄອງປະເພນີອັນດີງາມ ຊຶ່ງສະແດງອອກໃນວິຖີຊີວິດ, ມາລະຍາດໃນສັງຄົມ, ພາສາ, ຕົວອັກສອນ, ຕົວເລກ, ພື້ນແຜ່ນ, ຕຳນານ, ນິທານ, ສຸພາສິດ, ກາບກອນ, ສຽງດົນຕີພື້ນເມືອງ, ບົດຟ້ອນພື້ນເມືອງ, ສຽງຮ້ອງ, ທຳນອງເພງ, ຂັບລຳ, ຕຳລາຢາພື້ນເມືອງ ແລະ ອື່ນໆ ທີ່ໄດ້ສືບທອດກັນມາ.

## ໝວດທີ 2
## ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ

**ມາດຕາ 12 ປະເພດມໍລະດົກແຫ່ງຊາດທາງດ້ານປະຫວັດສາດ**

ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ ມີ ສອງ ປະເພດ ຄື:

1. ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ເປັນວັດຖຸ;
2. ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ.

**ມາດຕາ 13(ປັບປຸງ) ມໍຣະດົກແຫ່ງຊາດທາງດ້ານປະຫວັດສາດທີ່ເປັນວັດຖຸ**

ມໍຣະດົກແຫ່ງຊາດທາງດ້ານປະຫວັດສາດທີ່ເປັນວັດຖຸ ແມ່ນ ມໍຣະດົກທີ່ມີຕົວຕົນ, ເປັນຊັບສິນບັດອັນລ້ຳຄ່າ ທາງດ້ານປະຫວັດສາດ ຊຶ່ງມີ ສິ່ງທີ່ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ເປັນຕົ້ນ ທໍ່, ໂຮງ, ອາວຸດຍຸດໂທປະກອນ, ພາຫະນະ, ເຄື່ອງອຸປະໂພກ, ເຄື່ອງບໍລິໂພກ, ເອກະສານທີ່ໄດ້ບັນທຶກໄວ້, ສະຖານທີ່ປະຫວັດສາດ ເຊັ່ນ ສະໜໍລະພູມ, ອະນຸສອນສະຖານ, ຖານທີ່ໝັ້ນຂອງຂະບວນການຕໍ່ສູ້ຂອງປະຊາຊົນ, ບັນພະບູລຸດ ແລະ ຜູ້ນຳການປະຕິວັດ.

**ມາດຕາ 14 ມໍຣະດົກແຫ່ງຊາດທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ**

ມໍຣະດົກແຫ່ງຊາດທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ ແມ່ນ ມໍຣະດົກທາງດ້ານຈິດໃຈ ທີ່ຕິດພັນກັບປະຫວັດສາດແຕ່ລະຍຸກແຕ່ລະສະໄໝ ເຊັ່ນ ແນວຄິດ, ທິດສະດີ, ອຸດົມການ ຊຶ່ງສະແດງເຖິງມູນເຊື້ອຮັກຊາດ, ພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ, ປັນຍາຄວາມຮູ້, ຄວາມສາມາດ, ຍຸດທະສາດ, ສິລະປະຍຸດ, ຍຸດທະວິທີ, ບົດຮຽນໃນການຕໍ່ສູ້, ການນຳພາ, ການປົກຄອງ ແລະ ການສ້າງສາພັດທະນາປະເທດຊາດ.

## ໝວດທີ 3
## ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 15 ປະເພດມໍຣະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ມີ ສອງ ປະເພດ ຄື:

1. ມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ;
2. ມໍຣະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ.

**ມາດຕາ 16 ມໍຣະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ**

ມໍຣະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ ແມ່ນ ມໍຣະດົກທີ່ມີຄວາມສວຍງາມອັນໂດດເດັ່ນ, ອຸດົມສົມບູນໄປດ້ວຍຊີວະນາໆພັນ ເປັນຕົ້ນ ປ່າສະຫງວນ, ເຂດອະນຸລັກ ຊີວະນາໆພັນ, ຖ້ຳທຳມະຊາດ, ພູ, ຜາ, ນ້ຳຕົກຕາດ, ແກ້ງ, ຄອນ, ແມ່ນ້ຳ, ລຳເຊ, ເກາະດອນ, ຫ້ວຍ, ໜອງ, ຄອງ, ບຶງ, ພືດ, ສັດ ແລະ ອື່ນໆ.

**ມາດຕາ 17(ປັບປຸງ) ມໍຣະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ**

ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ ແມ່ນ ມໍຣະດົກອັນລ້ຳຄ່າທາງດ້ານທຳມະຊາດ ທີ່ມີຄວາມສຳຄັນ, ໂດດເດັ່ນທາງດ້ານທໍລະນີສາດ, ຊີວະສາດ ແລະ ພູມສາດ ເປັນຕົ້ນ ແຮ່ທາດ, ພືດ, ສັດ, ພູ, ຜາ, ປ່າໄມ້.

# ພາກທີ III
# ມໍຣະດົກແຫ່ງຊາດ ແລະ ສິນບັດນິ່ງເນືອງ
## ໝວດທີ 1
## ລະດັບມໍຣະດົກແຫ່ງຊາດ

### ມາດຕາ 18(ປັບປຸງ) ລະດັບມໍຣະດົກແຫ່ງຊາດ

ມໍຣະດົກແຫ່ງຊາດ ມີ ສີ່ ລະດັບ ດັ່ງນີ້:

1. ລະດັບທ້ອງຖິ່ນ;
2. ລະດັບຊາດ;
3. ລະດັບພາກພື້ນ;
4. ລະດັບໂລກ.

### ມາດຕາ 19(ປັບປຸງ) ມໍຣະດົກແຫ່ງຊາດລະດັບທ້ອງຖິ່ນ

ມໍຣະດົກແຫ່ງຊາດລະດັບທ້ອງຖິ່ນ ແມ່ນ ມໍຣະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບທ້ອງຖິ່ນ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ຂອງທ້ອງຖິ່ນ ນັ້ນ ເຊັ່ນ ພະທາດອິງຮັງ, ພະບາດໂພນສັນ, ພະທາດສີໂຄດຕະບອງ, ຖ້ຳປິວ, ຫີນຕັ້ງ, ບໍ່ນ້ຳອຸ່ນ, ດົນຕີພື້ນເມືອງ, ຂັບ, ລຳ, ຟ້ອນ.

### ມາດຕາ 20(ປັບປຸງ) ມໍຣະດົກແຫ່ງຊາດລະດັບຊາດ

ມໍຣະດົກແຫ່ງຊາດລະດັບຊາດ ແມ່ນ ມໍຣະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງ ເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ ເປັນມໍຣະດົກຂອງວິງສາຄະນະຍາດແຫ່ງຊາດ ເຊັ່ນ ທົ່ງໄຫຫີນ, ພະທາດຫຼວງວຽງຈັນ, ວັດຊຽງທອງ, ຖ້ຳເມືອງວຽງໄຊ, ຄອນພະເພັງ, ຫຼີ່ຜີ, ແບບຟ້ອນລຳວົງລາວ, ນິທານສັງສິນໄຊ, ນິທານ ສຽວສະຫວາດ.

### ມາດຕາ 21(ປັບປຸງ) ມໍຣະດົກແຫ່ງຊາດລະດັບພາກພື້ນ

ມໍຣະດົກແຫ່ງຊາດລະດັບພາກພື້ນ ແມ່ນ ມໍຣະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບພາກພື້ນ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງ ເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ໂດຍໄດ້ຮັບການຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ປະຈຳພາກພື້ນ ເຊັ່ນ ປ່າສະຫງວນແຫ່ງຊາດ.

### ມາດຕາ 22(ປັບປຸງ) ມໍຣະດົກແຫ່ງຊາດລະດັບໂລກ

ມໍຣະດົກແຫ່ງຊາດລະດັບໂລກ ແມ່ນ ມໍຣະດົກຂອງລາວທີ່ມີຄຸນຄ່າອັນໂດດເດັ່ນລະດັບ ໂລກ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ໃດ

ໜຶ່ງ ຂອງ ສປປ ລາວ ໂດຍໄດ້ຮັບການຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ເຊັ່ນ ເມືອງຫຼວງພະບາງ, ວັດພູຈຳປາສັກ.

## ໝວດທີ 2
## ສົມບັດມໍ່ລະດົກ

**ມາດຕາ 23(ປັບປຸງ) ຄວາມສຳຄັນຂອງສົມບັດມີ່ງເມືອງ**

ສົມບັດມີ່ງເມືອງ ປະກອບດ້ວຍ ມໍລະດົກແຫ່ງຊາດທີ່ມີຄຸນຄ່າອັນໂດດເດັ່ນເປັນພິເສດ, ຫາຍາກ, ເປັນເອກະລັກຂອງຊາດ ແລະ ເປັນທີ່ສັກກາລະບູຊາ ຊຶ່ງມີຄວາມສຳຄັນ ທີ່ພົນລະເມືອງລາວທຸກຄົນ ຕ້ອງໄດ້ເອົາໃຈໃສ່ປົກປັກຮັກສາ, ອະນຸລັກໃຫ້ໝັ້ນຄົງ ຢູ່ຄູ່ບ້ານຄູ່ເມືອງ.

**ມາດຕາ 24(ປັບປຸງ) ປະເພດສົມບັດມີ່ງເມືອງ**

ສົມບັດມີ່ງເມືອງ ມີທັງສິ່ງທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ເຊັ່ນ ພະບາງ, ພະທາດຫຼວງວຽງຈັນ, ຫໍພະແກ້ວ, ວັດສີສະເກດ, ວັດຊຽງທອງ, ຮີດສິບສອງ ຄອງສິບສີ່ ແລະ ອື່ນໆ.

## ພາກທີ IV
## ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ, ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ
## ໝວດທີ 1
## ການຄຸ້ມຄອງມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 25(ປັບປຸງ) ການຄຸ້ມຄອງ**

ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ ໄດ້ຮັບການຄຸ້ມຄອງ ດ້ວຍການຂຶ້ນທະບຽນ ແລະ ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ລວມທັງ ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ.

ລັດ ຄຸ້ມຄອງ, ປົກປ້ອງ ກຳມະສິດ ຫຼື ລິຂະສິດ ຕໍ່ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ເປັນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ ພາຍໃນປະເທດ ຫຼື ຕົກຢູ່ນອກດິນແດນຂອງ ສປປ ລາວ ຫຼື ຖືກຕ່າງປະເທດເອົາໄປເປັນ ກຳມະສິດ ຫຼື ລິຂະສິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

ການຄຸ້ມຄອງມໍລະດົກແຫ່ງຊາດ ທີ່ໄດ້ຮັບການຮັບຮອງ ແລະ ຂຶ້ນທະບຽນເປັນມໍລະດົກພາກພື້ນ ຫຼື ມໍລະດົກໂລກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26(ປັບປຸງ) ການຂຶ້ນທະບຽນ**

ມໍຣະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໄວ້ໃນຄອບຄອງ ຕ້ອງໄດ້ຂຶ້ນທະບຽນ.

ລັດ ດຳເນີນການຊອກຄົ້ນ, ເກັບກຳມໍຣະດົກປະເພດຕ່າງໆ ເພື່ອປະເມີນຄຸນຄ່າ, ຈັດແບ່ງລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນ ກໍຊຸກຍູ້ໃຫ້ຜູ້ຄອບຄອງມໍຣະດົກ ສະເໜີ ຂຶ້ນທະບຽນ ດັ່ງນີ້:

1. ມໍຣະດົກແຫ່ງຊາດລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນ ນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ;

2. ມໍຣະດົກແຫ່ງຊາດລະດັບຊາດ ໃຫ້ຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ມໍຣະດົກແຫ່ງຊາດລະດັບພາກພື້ນ ແລະ ລະດັບໂລກ ໃຫ້ຂຶ້ນທະບຽນ ນຳອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງຕາມການສະເໜີຂອງລັດຖະບານ ແຫ່ງ ສປປ ລາວ;

4. ມໍຣະດົກແຫ່ງຊາດ ທີ່ຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ຂຶ້ນທະບຽນນຳ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະກະຊວງອື່ນທີ່ກ່ຽວຂ້ອງ;

5. ມໍຣະດົກແຫ່ງຊາດ ທີ່ເປັນສົມບັດມິ່ງເມືອງ ໃຫ້ຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ພາຍຫຼັງຂຶ້ນທະບຽນແລ້ວ ລັດຈະຮັບຮູ້ມໍຣະດົກດັ່ງກ່າວເປັນມໍລະດົກແຫ່ງຊາດ ພ້ອມທັງຮັບຮູ້ສິດຄອບຄອງຂອງເຈົ້າຂອງມໍຣະດົກ.

ຖ້າຫາກມໍຣະດົກນັ້ນບໍ່ໄດ້ຂຶ້ນທະບຽນ ເຈົ້າຂອງມໍຣະດົກ ຈະບໍ່ມີສິດດຳເນີນກິດຈະກຳຕ່າງໆ ກ່ຽວກັບມໍຣະດົກດັ່ງກ່າວ ເຊັ່ນ ການວາງສະແດງ, ການຈຳລອງແບບ ແລະ ອື່ນໆ.

ມໍຣະດົກແຫ່ງຊາດລະດັບຊາດ ທີ່ມີຄຸນຄ່າສູງ, ຫາຍາກ ແລະ ເປັນເອກະລັກຂອງຊາດ ທີ່ໄດ້ຮັບການຄົ້ນຄວ້າ ແລະ ຢັ້ງຢືນແລ້ວ ຕ້ອງສະເໜີຂຶ້ນທະບຽນກຳມະສິດ ແລະ ລິຂະສິດຂອງຊາດ ນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

**ມາດຕາ 27(ໃໝ່) ຂັ້ນຕອນການຂຶ້ນທະບຽນ**

ການຂຶ້ນທະບຽນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງຂໍຂຶ້ນທະບຽນ;
2. ການພິຈາລະນາການຂຶ້ນທະບຽນ;
3. ການເກັບຮັກສາເອກະສານຂຶ້ນທະບຽນ;
4. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ.

**ມາດຕາ 28(ໃໝ່) ການຍື່ນຄຳຮ້ອງຂໍຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍຂຶ້ນທະບຽນ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຜ່ານອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ,

ສຳລັບເຂດຫ່າງໄກສອກຫຼີກຈາກຕົວເມືອງ ໃຫ້ຍື່ນຕໍ່ອົງການປົກຄອງບ້ານ ບ່ອນທີ່ຕົນອາໄສຢູ່ ໂດຍໃຫ້ປະຕິບັດຖືກຕ້ອງຕາມລະບຽບການຂຶ້ນທະບຽນ.

**ມາດຕາ 29(ໃໝ່) ການພິຈາລະນາການຂຶ້ນທະບຽນ**

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ກ່ຽວຂ້ອງ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວ ສູງສຸດບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ຄຳຮ້ອງຂໍຂຶ້ນທະບຽນ ແລະ ການຂຶ້ນທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການຂຶ້ນທະບຽນ ຊຶ່ງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ວາງອອກ.

**ມາດຕາ 30(ໃໝ່) ການເກັບຮັກສາເອກະສານຂຶ້ນທະບຽນ**

ເອກະສານຂຶ້ນທະບຽນ ກ່ຽວກັບມໍລະດົກແຫ່ງຊາດທຸກປະເພດ ຕ້ອງເກັບຮັກສາໄວ້ໃຫ້ດີ, ມີຫ້ອງເກັບມ້ຽນໄວ້ສະເພາະ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ.

**ມາດຕາ 31(ໃໝ່) ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ**

ບຸກຄົນໃດທີ່ເຫັນວ່າ ການຂຶ້ນທະບຽນນັ້ນ ບໍ່ຖືກຕ້ອງແລ້ວ ກໍມີສິດຮ້ອງຂໍ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງ. ໃນກໍລະນີທີ່ຂະແໜງການດັ່ງກ່າວ ຫາກບໍ່ພິຈາລະນາ ບຸກຄົນນັ້ນກໍມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງການຂຶ້ນທະບຽນດັ່ງກ່າວ.

ສຳລັບການຂຶ້ນທະບຽນທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນນັ້ນ ບຸກຄົນດັ່ງກ່າວ ກໍມີສິດຂໍຄັດຄ້ານການຂຶ້ນທະບຽນ ເພື່ອໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາ ຕາມລະບຽບກົດໝາຍ.

ຂະແໜງການດັ່ງກ່າວ ທີ່ເຫັນວ່າ ການຂຶ້ນທະບຽນຂອງຕົນບໍ່ຖືກຕ້ອງ ກໍມີສິດປ່ຽນແປງ ຫຼື ລຶບລ້າງໂດຍໜ້າທີ່ໄດ້ ພາຍໃນກຳນົດສິບຫ້າວັນ ນັບແຕ່ວັນທີ່ໄດ້ພົບເຫັນເປັນຕົ້ນໄປ.

ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານການຂຶ້ນທະບຽນ ໃຫ້ພິຈາລະນາພາຍໃນສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 32(ປັບປຸງ) ການຈຳລອງແບບ**

ການຈຳລອງແບບ ແມ່ນ ການສ້າງວັດຖຸໃໝ່ຂຶ້ນ ໂດຍການກ່າຍເອົາແບບ, ສີສັນ, ລວດລາຍ ຂອງມໍລະດົກດັ້ງເດີມ.

ການອະນຸຍາດໃຫ້ດຳເນີນການຈຳລອງແບບມໍລະດົກແຫ່ງຊາດ ປະເພດຕ່າງໆ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33(ປັບປຸງ) ການສ້າງໃໝ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງ, ປັ້ນຫຼໍ່ ສິ່ງໃໝ່ລະດັບຊາດ ເຊັ່ນ ອະນຸສາວະລີ, ບັນພະບຸລຸດ, ຜູ້ນຳ, ວິລະຊົນແຫ່ງຊາດ, ສາສະນະສະຖານ, ພະພຸດທະຮູບ ຕ້ອງໄດ້ຮັບອະນຸຍາດ ຈາກລັດຖະບານ.

ສຳລັບການສ້າງ, ປັ້ນຫຼໍ່ ສິ່ງໃໝ່ລະດັບທ້ອງຖິ່ນ ລວມທັງການປັ້ນຫຼໍ່ຮູບອະນຸສອນຂອງຕະກຸນສ່ວນບຸກຄົນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 34(ປັບປຸງ) ການວາງສະແດງ**

ການວາງສະແດງມໍລະດົກແຫ່ງຊາດ ມີ ສາມ ປະເພດ ຕົ້ນຕໍ ດັ່ງນີ້:

1. ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;
2. ການວາງສະແດງ ເພື່ອໃຫ້ມີການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ບູລະນະ ປະຕິສັງຂອນ;
3. ການວາງສະແດງ ເພື່ອການຄ້າ.

ການວາງສະແດງມໍລະດົກແຫ່ງຊາດ ອາດຈະດຳເນີນຢູ່ພາຍໃນ ຫຼື ຢູ່ຕ່າງປະເທດ.

ການວາງສະແດງມໍລະດົກແຫ່ງຊາດ ຢູ່ພາຍໃນປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພາຍຫຼັງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ສຳລັບການວາງສະແດງມໍລະດົກແຫ່ງຊາດ ຢູ່ຕ່າງປະເທດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 35(ປັບປຸງ) ການພົບເຫັນ, ການພົບພໍ້ ແລະ ການຄົ້ນພົບ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຫາກໄດ້ພົບເຫັນ, ພົບພໍ້ ແລະ ຄົ້ນພົບມໍລະດົກແຫ່ງຊາດ ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງໃນທັນໃດ ພ້ອມທັງໂຈະກິດຈະການນັ້ນຈົນກວ່າ ຈະໄດ້ຮັບການຕົກລົງ ໃຫ້ອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ສືບຕໍ່.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ ພົບເຫັນ, ພົບພໍ້ ແລະ ຄົ້ນພົບສະຖານທີ່ ຫຼື ໄດ້ຮັບຂໍ້ມູນກ່ຽວກັບສະຖານທີ່, ທີ່ມີ ຫຼື ສົງໄສວ່າມີມໍລະດົກແຫ່ງຊາດ, ເຄື່ອງຄ້ຳຂອງຄູນ ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນທັນໃດ ແລະ ບໍ່ໃຫ້ຂຸດຄົ້ນ ຫຼື ເຄື່ອນຍ້າຍ ໂດຍບໍ່ໄດ້ຮັບອະນຸຍາດ.

**ມາດຕາ 36(ປັບປຸງ) ການຄົ້ນຄວ້າ ວິໄຈ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບການສົ່ງເສີມ ໃຫ້ດໍາເນີນການຄົ້ນຄວ້າ ວິໄຈ ກ່ຽວກັບມໍລະດົກແຫ່ງຊາດ ທາງດ້ານວັດທະນະທໍາ ແລະ ປະຫວັດສາດ ດ້ວຍນະໂຍບາຍຕ່າງໆ ຕາມລະບຽບກົດໝາຍ.

ການຄົ້ນຄວ້າ ວິໄຈ ກ່ຽວກັບມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

ສໍາລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າ ວິໄຈ ກ່ຽວກັບມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດ ຈາກ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

ຂໍ້ມູນ ແລະ ຜົນຂອງການຄົ້ນຄວ້າ ວິໄຈນັ້ນ ຕ້ອງມອບຕົ້ນສະບັບ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເພື່ອເກັບຮັກສາໄວ້ ແລະ ໂຄສະນາເຜີຍແຜ່ຕາມລະບຽບການ.

**ມາດຕາ 37(ປັບປຸງ) ການສົ່ງອອກນອກປະເທດເພື່ອການວິໄຈ**

ການສົ່ງສິ້ນສ່ວນ ຫຼື ວັດຖຸທີ່ເປັນມໍລະດົກແຫ່ງຊາດ ທາງດ້ານວັດທະນະທໍາ ແລະ ປະຫວັດສາດ ຊຶ່ງມີຄຸນຄ່າສູງ ອອກນອກປະເທດ ເພື່ອການວິໄຈ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

**ມາດຕາ 38(ປັບປຸງ) ການນໍາເຂົ້າ, ໂຄສະນາ, ເຜີຍແຜ່ ຫຼື ຈໍາໜ່າຍ**

ການນໍາເຂົ້າ, ໂຄສະນາ, ເຜີຍແຜ່ ຫຼື ຈໍາໜ່າຍ ຜະລິດຕະພັນ ທາງດ້ານວັດທະນະທໍາ ຂອງຕ່າງປະເທດ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

ຜະລິດຕະພັນທາງດ້ານວັດທະນະທໍາຂອງຕ່າງປະເທດ ທີ່ເປັນວັດຖຸ ໂດຍສະເພາະ ພະພຸດທະຮູບ ຫຼື ບໍ່ເປັນວັດຖຸ ທີ່ບໍ່ສອດຄ່ອງກັບວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດລາວ ຈະບໍ່ອະນຸຍາດໃຫ້ນໍາເຂົ້າ, ໂຄສະນາ, ເຜີຍແຜ່ ຫຼື ຈໍາໜ່າຍ ແຕ່ຢ່າງໃດ.

**ມາດຕາ 39(ປັບປຸງ) ການໂອນ**

ມໍລະດົກແຫ່ງຊາດ ທາງດ້ານວັດທະນະທໍາ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກໍາມະສິດ, ລິຂະສິດໃຫ້ຜູ້ອື່ນໄດ້ ຕາມລະບຽບກົດໝາຍ ແຕ່ຜູ້ໄດ້ຮັບໂອນນັ້ນ ຕ້ອງໄດ້ແຈ້ງໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ບ່ອນທີ່ຕົນຂຶ້ນທະບຽນ ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນໂອນເປັນຕົ້ນໄປ.

**ມາດຕາ 40(ປັບປຸງ) ການຊື້, ຂາຍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຊື້, ຂາຍ ວັດຖຸທີ່ເປັນມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ໃນກໍລະນີວັດຖຸທີ່ເປັນມໍລະດົກແຫ່ງຊາດນັ້ນຫາກມີຄຸນຄ່າສູງ, ໂດດເດັ່ນ ລັດ ມີບູລິມະສິດຊື້ເອົາວັດຖຸດັ່ງກ່າວ ຕາມລາຄາທີ່ຕົກລົງກັນ.

ລັດ ບໍ່ອະນຸຍາດໃຫ້ຊື້, ຂາຍ ມໍລະດົກແຫ່ງຊາດ ອອກນອກປະເທດ. ສຳລັບການແລກປ່ຽນລະຫວ່າງປະເທດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

**ມາດຕາ 41(ປັບປຸງ) ການສືບທອດ**

ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດມອບໂອນໃຫ້ຜູ້ອື່ນສືບທອດໄດ້ ແຕ່ຜູ້ຮັບການສືບທອດ ຕ້ອງໄດ້ແຈ້ງໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຕົນຂຶ້ນທະບຽນນັ້ນ ພາຍໃນກຳນົດ ຫົກສິບວັນ ນັບແຕ່ວັນໄດ້ຮັບການສືບທອດເປັນຕົ້ນໄປ. ໃນກໍລະນີທີ່ມີຫຼາຍຄົນ ໄດ້ຮັບການສືບທອດນຳກັນນັ້ນ ຈະມອບສັນທະເປັນລາຍລັກອັກສອນ ໃຫ້ຜູ້ໃດຜູ້ໜຶ່ງເປັນຜູ້ຕາງໜ້າໄປແຈ້ງກໍໄດ້.

## ໝວດທີ 2
## ການນຳໃຊ້ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 42(ປັບປຸງ) ຈຸດປະສົງການນຳໃຊ້**

ການນຳໃຊ້ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ມີຈຸດປະສົງ ດັ່ງນີ້:

1. ໃຫ້ເປັນພື້ນຖານແຫ່ງການຢືນຢັງຄົງຕົວຂອງຊາດ, ເປັນກຳລັງດັນ ໃຫ້ສັງຄົມຂະຫຍາຍຕົວ ທັງແມ່ນຈຸດໝາຍຂອງການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ;

2. ສຶກສາອົບຮົມພົນລະເມືອງ ໃຫ້ມີນ້ຳໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈ ຕໍ່ມູນເຊື້ອຂະຫຍັນໝັ່ນພຽນ, ປະດິດສ້າງ, ຕໍ່ສູ້ພິລະອາດຫານ, ສາມັກຄີເປັນປຶກແຜ່ນຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;

3. ເພີ່ມທະວີສ້າງສາງມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ໃຫ້ອຸດົມຮັ່ງມີ;

4. ສົ່ງເສີມອຸດສາຫະກຳການທ່ອງທ່ຽວ;

5. ເຊື່ອມໂຍງເຂົ້າກັບການນຳໃຊ້ມໍລະດົກ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ຂອງ ພາກພື້ນ ແລະ ສາກົນ;

6. ຄົ້ນຄວ້າ ວິໄຈທາງດ້ານບູຮານວິທະຍາ, ປະຫວັດສາດ ແລະ ອື່ນໆ.

**ມາດຕາ 43(ປັບປຸງ) ການນຳໃຊ້**

ການນຳໃຊ້ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ຕ້ອງໃຫ້ຖືກຕ້ອງ ຕາມຈຸດປະສົງ, ໃຫ້ມີປະສິດທິຜົນ, ຮັກສາສະຖານະພາບເດີມ ແລະ ຍືນຍົງ ໂດຍນຳໃຊ້ລາຍຮັບທີ່ໄດ້ມາຈາກມໍລະດົກແຫ່ງຊາດນັ້ນ ເຂົ້າໃນການພັດທະນາວຽກງານມໍລະດົກແຫ່ງຊາດ.

## ໝວດທີ 3

## ການປົກປັກຮັກສາ, ການອະນຸລັກ, ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 44(ປັບປຸງ) ການປົກປັກຮັກສາ, ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ເປັນວັດຖຸ**

ໃນການປົກປັກຮັກສາ, ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ເປັນວັດຖຸ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງຄາດຄະເນຜົນເສຍຫາຍ ທີ່ຈະເກີດຂຶ້ນແກ່ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;

2. ພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ພັດທະນາອຸດສາຫະກຳ, ກະສິກຳ, ພື້ນຖານໂຄງລ່າງ ໃນເຂດທີ່ມີ ຫຼື ສົງໄສວ່າມີມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງມີມາດຕະການ ເພື່ອປົກປັກຮັກສາມໍລະດົກແຫ່ງຊາດດັ່ງກ່າວ ບໍ່ໃຫ້ເສຍຫາຍ.

**ມາດຕາ 45( ປັບປຸງ) ເຂດມໍລະດົກສະຖານ**

ມໍລະດົກສະຖານ ໄດ້ແບ່ງອອກເປັນ ສີ່ ເຂດ ດັ່ງນີ້:

1. ເຂດ 1 ແມ່ນ ເຂດໃຈກາງ ເປັນສະຖານທີ່ຕັ້ງຂອງມໍລະດົກ ຊຶ່ງຕ້ອງຮັກສາສະພາບເດີມໄວ້ ແລະ ບໍ່ໃຫ້ມີການປຸກສ້າງ;

2. ເຂດ 2 ແມ່ນ ເຂດອ້ອມຮອບເຂດໃຈກາງ ຊຶ່ງອະນຸຍາດໃຫ້ດຳເນີນກິດຈະກຳຈຳນວນໜຶ່ງ ເພື່ອສົ່ງເສີມຄຸນຄ່າຂອງເຂດ 1 ແຕ່ບໍ່ໃຫ້ກໍ່ຄວາມເສຍຫາຍຕໍ່ສະພາບແວດລ້ອມຂອງເຂດນັ້ນ;

3. ເຂດ 3 ແມ່ນ ເຂດກັນຊົນ, ເຂດປ້ອງກັນ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອປ້ອງກັນ ແລະ ຮັບໃຊ້ໃຫ້ແກ່ ເຂດ 1 , ເຂດ 2 ເພື່ອຮອງຮັບການພັດທະນາ, ການທ່ອງທ່ຽວ ແລະ ການຂົນສົ່ງ;

4. ເຂດ 4 ແມ່ນ ເຂດຄຸ້ມຄອງ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອຮັບໃຊ້ໃຫ້ແກ່ເຂດ 1, ເຂດ 2 ແລະ ເຂດ 3 ເພື່ອ ຂະຫຍາຍຕົວເມືອງ ແລະ ຮອງຮັບການທ່ອງທ່ຽວ.

ການຄຸ້ມຄອງເຂດມໍລະດົກສະຖານນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 46( ປັບປຸງ) ການປົກປັກຮັກສາເຂດມໍລະດົກສະຖານ

ເຂດມໍລະດົກສະຖານ ຕ້ອງໄດ້ຮັບການປົກປັກຮັກສາ ເພື່ອບໍ່ໃຫ້ຖືກບຸກລຸກ, ທຳລາຍ ຫຼື ເສຍ ຫາຍ ຈາກການກະທຳຂອງຄົນ ຫຼື ຈາກໄພທຳມະຊາດ.

ໃນກໍລະນີທີ່ມີການບຸກລຸກ, ທຳລາຍນັ້ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງສະກັດກັ້ນ ແລະ ມີມາດຕະການແກ້ໄຂຢ່າງທັນການ ໂດຍປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນບ່ອນ ມໍລະດົກສະຖານຕັ້ງຢູ່ ແລ້ວແຈ້ງໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ມາດຕາ 47(ປັບປຸງ) ການບູລະນະສ້ອມແປງ ແລະ ການປະຕິສັງຂອນ

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດທາງດ້ານວັດທະນະ ທຳ ແລະປະຫວັດສາດ ແມ່ນ ການເຮັດໃຫ້ມໍລະດົກດັ່ງກ່າວ ທີ່ຖືກທຳລາຍ ແລະ ເຊື່ອມໂຊມນັ້ນມີ ການປັວແປງ ແລະ ສ້ອມແຊມຄືນໃໝ່ໃຫ້ຢູ່ໃນສະພາບທີ່ດີ ແລະ ຮັກສາໄວ້ຄຸນລັກສະນະເດີມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສ່ວນຮ່ວມໃນການບູລະນະສ້ອມແປງ ແລະ ການປະ ຕິສັງຂອນມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸ ຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຕົນຂຶ້ນທະບຽນ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດ ແຕ່ລະປະເພດ ໄດ້ກຳ ນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 48(ປັບປຸງ) ເງື່ອນໄຂການບູລະນະສ້ອມແປງ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດ

ການບູລະນະສ້ອມແປງ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດ ທາງດ້ານວັດທະນະ ທຳ ແລະປະຫວັດສາດ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂໃນການບູລະນະ ສ້ອມແປງ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດ ທີ່ມີນາຍຊ່າງສີມືທີ່ຊຳນານງານ ທາງດ້ານວັດ ທະນະທຳ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ;

2. ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງມໍລະດົກແຫ່ງຊາດ ບ່ອນມໍລະດົກແຫ່ງ ຊາດນັ້ນໄດ້ຂຶ້ນທະບຽນນຳ. ສຳລັບມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ຕ້ອງຮັກສາຄຸນລັກສະນະເດີມ ຂອງມໍລະດົກແຫ່ງຊາດນັ້ນໄວ້.

ມາດຕາ 49(ປັບປຸງ) ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດທີ່ບໍ່ເປັນວັດຖຸ

ມໍລະດົກແຫ່ງຊາດທີ່ບໍ່ເປັນວັດຖຸ ຕ້ອງໄດ້ຂຶ້ນທະບຽນ ທັງຕ້ອງໄດ້ຮັບການປົກປັກຮັກສາ ແລະ ການອະນຸລັກ.

ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ ຕ້ອງໄປຄຽງຄູ່ກັບການສົ່ງເສີມ, ເຜີຍແຜ່ ແລະ ນຳໃຊ້ຢ່າງກວ້າງຂວາງ ທັງພາຍໃນ ແລະ ຕ່າງປະເທດ.

ການຄົ້ນຄວ້າ, ປະດິດແຕ່ງ ຕ້ອງຮັບປະກັນລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ.

ຄົນຕ່າງດ້າວ, ຄົນຕ່າງປະເທດ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ, ອົງການຈັດຕັ້ງສາກົນທີ່ຈະດຳເນີນການຄົ້ນຄວ້າ ວິໄຈມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ ຕ້ອງໃຫ້ສອດຄ່ອງກັບເນື້ອໃນຄວາມເປັນຈິງຂອງມໍລະດົກນັ້ນ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ລວມທັງການຮັກສາຄຸນລັກສະນະເດີມ ຂອງມໍລະດົກແຫ່ງຊາດນັ້ນໄວ້.

ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V

## ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ ແລະ ການຟື້ນຟູ ມໍລະດົກແຫ່ງຊາດທາງດ້ານທຳມະຊາດ

### ໝວດທີ 1

### ການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 50(ປັບປຸງ) ການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດໃນຂອບເຂດທົ່ວປະເທດ ໄດ້ຮັບການຄຸ້ມຄອງດ້ວຍການຂຶ້ນທະບຽນ ແລະ ການແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ລະຫວ່າງຂະແໜງການທີ່ກ່ຽວຂ້ອງດ້ວຍກັນ ເຊັ່ນ ຂະແໜງການຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະສິກຳ ແລະ ປ່າໄມ້.

ລັດ ຄຸ້ມຄອງ, ປົກປ້ອງ ກຳມະສິດ ຫຼື ລິຂະສິດ ຕໍ່ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ ພາຍໃນປະເທດ.

ການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານທຳມະຊາດ ທີ່ໄດ້ຮັບການຮັບຮອງ ແລະ ຂຶ້ນທະບຽນເປັນມໍລະດົກພາກພື້ນ ຫຼື ມໍລະດົກໂລກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 51(ປັບປຸງ) ການຂຶ້ນທະບຽນມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໄວ້ໃນຄອບຄອງ ຕ້ອງໄດ້ຂຶ້ນທະບຽນ.

ລັດ ດຳເນີນການຊອກຄົ້ນ, ເກັບກຳມໍລະດົກທາງດ້ານທຳມະຊາດໃນເຂດຕ່າງໆ ເຊັ່ນ ເຂດທິວທັດທຳມະຊາດ, ເຂດນິເວດວິທະຍາ ເພື່ອປະເມີນຄຸນຄ່າ, ຈັດແບ່ງລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນ ກໍຊຸກຍູ້ໃຫ້ຜູ້ຄອບຄອງມໍລະດົກແຫ່ງຊາດ ສະເໜີ ຂຶ້ນທະບຽນ ດັ່ງນີ້:

1. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນ ນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ;

2. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບຊາດ ໃຫ້ຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ລະດັບພາກພື້ນ ແລະ ລະດັບໂລກ ໃຫ້ຂຶ້ນທະບຽນ ນຳອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງຕາມການສະເໜີຂອງລັດຖະບານ ແຫ່ງ ສປປ ລາວ;

ພາຍຫຼັງຂຶ້ນທະບຽນແລ້ວ ລັດຈະຮັບຮູ້ມໍລະດົກດັ່ງກ່າວເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດ ພ້ອມທັງຮັບຮູ້ສິດຄອບຄອງຂອງເຈົ້າຂອງມໍລະດົກ.

ຖ້າຫາກມໍລະດົກຍັງບໍ່ໄດ້ຂຶ້ນທະບຽນນັ້ນ ເຈົ້າຂອງມໍລະດົກ ຈະບໍ່ມີສິດດຳເນີນກິດຈະກຳຕ່າງໆ ກ່ຽວກັບມໍລະດົກດັ່ງກ່າວ ເຊັ່ນ ການຈຳລອງແບບ ແລະ ອື່ນໆ.

ມໍລະດົກແຫ່ງຊາດລະດັບຊາດທາງດ້ານທຳມະຊາດ ທີ່ມີຄຸນຄ່າສູງ, ຫາຍາກ ແລະ ເປັນເອກະລັກຂອງຊາດ ທີ່ຮັບການຄົ້ນຄວ້າ ແລະ ຢັ້ງຢືນແລ້ວ ຕ້ອງໄດ້ສະເໜີຂຶ້ນທະບຽນກຳມະສິດ ແລະ ລິຂະສິດ ຂອງຊາດ ນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

**ມາດຕາ 52 ການຄຸ້ມຄອງແຫຼ່ງຊີວະນາໆພັນ**

ແຫຼ່ງຊີວະນາໆພັນ ຊຶ່ງເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດ ເຊັ່ນ ທາມ, ບຶງ, ບຸ່ງ ຕ້ອງມີການຄຸ້ມຄອງດ້ວຍການກວດກາ, ຂຶ້ນທະບຽນ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 53 ການຄຸ້ມຄອງປ່າສະຫງວນ**

ປ່າສະຫງວນທີ່ໄດ້ຂຶ້ນທະບຽນເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດແລ້ວນັ້ນ ຕ້ອງມີການຄຸ້ມຄອງ ເພື່ອປົກປັກຮັກສາ ທຳມະຊາດໃຫ້ຍືນຍົງ ແລະ ອຸດົມສົມບູນ.

**ມາດຕາ 54 ການຄຸ້ມຄອງສວນອຸດທິຍານ**

ສວນອຸດທິຍານທຳມະຊາດ ຊຶ່ງອຸດົມຮັ່ງມີໄປດ້ວຍລະບົບນິເວດ, ສະອາດສວຍງາມເປັນໜ້າປະທັບໃຈ ທີ່ກາຍເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດນັ້ນ ຕ້ອງມີການຄຸ້ມຄອງ ເພື່ອໃຫ້ເປັນສະຖານທີ່ພັກຜ່ອນ ແລະ ທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 55(ປັບປຸງ) ການຄຸ້ມຄອງເຂດທິວທັດທຳມະຊາດ**

ເຂດທິວທັດທຳມະຊາດ ຊຶ່ງມີຄຸນຄ່າທາງດ້ານທັດສະນີຍະພາບອັນສວຍສົດງົດງາມ ແລະ ໂດດເດັ່ນ ທີ່ມີ ພູ, ຜາ, ປ່າໄມ້, ແມ່ນໍ້າ, ລຳເຊ, ນໍ້າຕົກຕາດ ແລະ ອື່ນໆ ຕ້ອງຂຶ້ນທະບຽນ ເປັນມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ແລະ ຕ້ອງມີການຄຸ້ມຄອງ ເພື່ອຮັກສາຄວາມສວຍງາມຂອງທຳມະຊາດໃຫ້ຍືນຍົງ.

ສຳລັບລະບຽບການລະອຽດກ່ຽວກັບ ການຄຸ້ມຄອງມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ໄດ້ກຳນົດໄວ້ຕ່າງຫາກ.

## ໝວດທີ 2
## ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ, ການຟື້ນຟູ ແລະ ການພັດທະນາ ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 56(ປັບປຸງ) ຈຸດປະສົງການນຳໃຊ້**

ການນຳໃຊ້ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ມີ ຈຸດປະສົງ ດັ່ງນີ້:

1. ໃຫ້ເປັນພື້ນຖານແຫ່ງການຍືນຍົງຄົງຕົວຂອງຊາດ, ເປັນກຳລັງດັນ ໃຫ້ສັງຄົມຂະຫຍາຍຕົວ ທັງແມ່ນຈຸດໝາຍຂອງການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ;
2. ສຶກສາອົບຮົມ, ປູກຈິດສຳນຶກ ໃຫ້ພົນລະເມືອງ ມີນໍ້າໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈ, ມີສະຕິໃນການປົກປັກຮັກສາສະພາບແວດລ້ອມ ໃຫ້ຍືນຍົງ ແລະ ພັດທະນາປະເທດຊາດໃຫ້ອຸດົມຮັ່ງມີ;
3. ສົ່ງເສີມອຸດສາຫະກຳການທ່ອງທ່ຽວທຳມະຊາດ;
4. ເຊື່ອມໂຍງເຂົ້າກັບການນຳໃຊ້ມໍຣະດົກທາງດ້ານທຳມະຊາດ ຂອງພາກພື້ນ ແລະ ສາກົນ;
5. ຄົ້ນຄວ້າ ວິໄຈທາງດ້ານທຳມະຊາດ, ນິເວດວິທະຍາ ແລະ ອື່ນໆ.

**ມາດຕາ 57(ປັບປຸງ) ການນຳໃຊ້**

ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ຕ້ອງນຳໃຊ້:

1. ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ໃຫ້ມີປະສິດທິຜົນ, ຍືນຍົງ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;
3. ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 58(ປັບປຸງ) ການປົກປັກຮັກສາ ແລະ ການອະນຸລັກ ມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ໃນການປົກປັກຮັກສາ, ການອະນຸລັກ ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງຄາດຄະເນຜົນເສຍຫາຍ ທີ່ຈະເກີດຂຶ້ນແກ່ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;

2. ພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ພັດທະນາອຸດສາຫະກຳ, ກະສິກຳ, ພື້ນຖານໂຄງລ່າງ ໃນເຂດທີ່ມີມໍລະດົກແຫ່ງຊາດທາງດ້ານທຳມະຊາດ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງມີມາດຕະການ ເພື່ອປົກປັກຮັກສາມໍລະດົກແຫ່ງຊາດດັ່ງກ່າວ ບໍ່ໃຫ້ຖືກບຸກລຸກ ຫຼື ທຳລາຍ.

**ມາດຕາ 59(ໃໝ່) ການຟື້ນຟູ**

ການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແມ່ນ ການເຮັດໃຫ້ທຳມະຊາດທີ່ຖືກທຳລາຍ ແລະ ເຊື່ອມໂຊມນັ້ນມີການຟື້ນຕົວ ແລະ ໄດ້ຮັບການປົວແປງໃຫ້ຢູ່ໃນສະພາບທີ່ດີ ແລະ ລະບົບນິເວດໃຫ້ມີຄວາມສົມບູນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສ່ວນຮ່ວມໃນການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ.

ການຟື້ນຟູມໍລະດົກແຫ່ງຊາດດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຕົນຂຶ້ນທະບຽນ.

**ມາດຕາ 60(ປັບປຸງ) ເງື່ອນໄຂ ການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂໃນການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ, ມີທຶນພຽງພໍ, ມີພະນັກງານທີ່ຊຳນານງານ ທາງດ້ານທຳມະຊາດ ແລະ ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ;

2. ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງມໍລະດົກແຫ່ງຊາດ ບ່ອນມໍລະດົກແຫ່ງຊາດນັ້ນໄດ້ຂຶ້ນທະບຽນນຳ. ສຳລັບມໍລະດົກແຫ່ງຊາດທາງດ້ານທຳມະຊາດ ລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ຕ້ອງຮັກສາທິວທັດທຳມະຊາດ ແລະ ລະບົບນິເວດ ໃຫ້ມີການຄົງຕົວ ແລະ ສວຍສົດງົດງາມ.

**ມາດຕາ 61(ປັບປຸງ) ການພັດທະນາ**

ການພັດທະນາມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແມ່ນ ການເຮັດໃຫ້ມໍລະດົກນັ້ນຍືນຍົງ, ອຸດົມສົມບູນ ແລະ ຮັ່ງມີຂຶ້ນ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງ

ຊາດ, ການສຶກສາຄົ້ນຄວ້າ, ຊອກຮູ້ຄຸນຄ່າອັນຍອດຍິ່ງຂອງມໍລະດົກດັ່ງກ່າວ ພ້ອມທັງເສີມຂະຫຍາຍທ່າແຮງຂອງມໍລະດົກນັ້ນ ເຂົ້າໃນວຽກງານທ່ອງທ່ຽວ, ວຽກງານປົກປັກຮັກສາສິ່ງແວດລ້ອມທຳມະຊາດໃນຂອບເຂດທົ່ວປະເທດ ທັງເປັນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

## ພາກທີ VI
## ຫໍພິພິທະພັນ

### ມາດຕາ 62 ປະເພດຫໍພິພິທະພັນ

ຫໍພິພິທະພັນ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ຫໍພິພິທະພັນຂອງລັດ;
2. ຫໍພິພິທະພັນລວມໝູ່;
3. ຫໍພິພິທະພັນເອກະຊົນ.

### ມາດຕາ 63(ປັບປຸງ) ຫໍພິພິທະພັນຂອງລັດ

ຫໍພິພິທະພັນຂອງລັດ ປະກອບດ້ວຍ:

1. ຫໍພິພິທະພັນແຫ່ງຊາດ ຊຶ່ງແມ່ນ ສະຖານທີ່ ສະສົມ, ທ້ອນໂຮມ, ສຶກສາ, ຄົ້ນຄວ້າວິໄຈ, ອະນຸລັກ, ປົກປັກຮັກສາ, ຂຶ້ນທະບຽນ, ຈັດວາງສະແດງ ແລະ ເຜີຍແຜ່ ວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນ ໃນຂອບເຂດທົ່ວປະເທດ;

2. ຫໍພິພິທະພັນຂອງຂະແໜງການ ຊຶ່ງແມ່ນ ສະຖານທີ່ ສະສົມ, ວາງສະແດງ, ອະນຸລັກ, ຮັກສາ ວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນຂອງຂະແໜງການ;

3. ຫໍພິພິທະພັນລະດັບທ້ອງຖິ່ນ ຊຶ່ງແມ່ນ ສະຖານທີ່ ສະສົມ, ວາງສະແດງ, ອະນຸລັກ, ຮັກສາ ວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນຂອງທ້ອງຖິ່ນ.

### ມາດຕາ 64(ໃໝ່) ຫໍພິພິທະພັນລວມໝູ່

ຫໍພິພິທະພັນລວມໝູ່ ແມ່ນ ສະຖານທີ່ ສະສົມ, ວາງສະແດງ, ອະນຸລັກ, ຮັກສາ ວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນ ຂອງ ສະມາຄົມ, ຊຸມຊົນ, ສະຫະກອນ ຫຼື ລວມໝູ່ໃນຂົງເຂດນັ້ນ.

### ມາດຕາ 65(ໃໝ່) ຫໍພິພິທະພັນເອກະຊົນ

ຫໍພິພິທະພັນເອກະຊົນ ແມ່ນ ສະຖານທີ່ ສະສົມ, ວາງສະແດງ, ອະນຸລັກ, ຮັກສາ ວັດຖຸພັນທີ່ມີຄຸນຄ່າ ຂອງສ່ວນບຸກຄົນ, ຄອບຄົວ ແລະ ຕະກຸນ.

**ມາດຕາ 66(ປັບປຸງ) ເງື່ອນໄຂ ການສ້າງຫໍພິພິທະພັນ**

ການສ້າງຫໍພິພິທະພັນ ຕ້ອງ ມີເງື່ອນໄຂ ດັ່ງນີ້:

1. ມີການສະສົມວັດຖຸທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ, ວິທະຍາສາດ, ເຕັກໂນໂລຊີ ໃນຈຳນວນທີ່ເໝາະສົມ ເພື່ອວາງສະແດງ;

2. ມີສະຖານທີ່ວາງສະແດງ, ສາງເກັບມ້ຽນທີ່ຮັບປະກັນ ແລະ ເໝາະສົມ;

3. ມີນັກວິຊາການທີ່ມີຄວາມຮູ້ກ່ຽວກັບພິພິທະພັນວິທະຍາ ຫຼື ວິຊາການອື່ນທີ່ກ່ຽວຂ້ອງ;

4. ມີທຶນຮອນ.

**ມາດຕາ 67(ໃໝ່) ການອະນຸຍາດສ້າງຫໍພິພິທະພັນ**

ການສ້າງຫໍພິພິທະພັນແຕ່ລະປະເພດ ຕ້ອງໄດ້ຮັບອະນຸຍາດ ດັ່ງນີ້:

1. ຫໍພິພິທະພັນແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດ ຈາກ ລັດຖະບານ ຕາມການສະເໜີ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ຫໍພິພິທະພັນຂອງຂະແໜງການ ແລະ ຂອງທ້ອງຖິ່ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການສະເໜີຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

3. ຫໍພິພິທະພັນລວມໝູ່ ແລະ ເອກະຊົນ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 68(ໃໝ່) ການຄຸ້ມຄອງຫໍພິພິທະພັນ**

ຫໍພິພິທະພັນແຕ່ລະປະເພດ ຕ້ອງມີການຄຸ້ມຄອງ ເພື່ອໃຫ້ເປັນສະຖານທີ່ສຶກສາອົບຮົມ, ຄົ້ນຄວ້າ ວິໄຈ, ອະນຸລັກ, ປົກປັກຮັກສາ, ຂຶ້ນທະບຽນ, ຈັດວາງສະແດງ ແລະ ເຜີຍແຜ່ ທັງພາຍໃນ ແລະ ຕ່າງປະເທດ.

ລະບຽບການລະອຽດກ່ຽວກັບການຄຸ້ມຄອງຫໍພິພິທະພັນແຕ່ລະປະເພດ ໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ VII
## ກອງທຶນມໍຣະດົກແຫ່ງຊາດ

**ມາດຕາ 69(ໃໝ່) ກອງທຶນມໍຣະດົກແຫ່ງຊາດ**

ກອງທຶນມໍຣະດົກແຫ່ງຊາດ ແມ່ນ ກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ເປັນຕົ້ນ ການຄຸ້ມຄອງ, ການປົກປັກຮັກສາ, ອະນຸລັກ, ບູລະນະສ້ອມແປງ ແລະ ປະຕິສັງຂອນມໍຣະດົກແຫ່ງຊາດ ໃຫ້ຍືນຍົງ ແລະ ພັດທະນາ.

**ມາດຕາ 70(ປັບປຸງ) ແຫຼ່ງກອງທຶນມໍລະດົກແຫ່ງຊາດ**

ແຫຼ່ງກອງທຶນມໍລະດົກແຫ່ງຊາດ ໄດ້ມາຈາກ:

1. ງົບປະມານຂອງລັດ;

2. ລາຍໄດ້ຈາກການນຳໃຊ້ຄຸນຄ່າຂອງມໍລະດົກແຫ່ງຊາດ ເຊັ່ນ ຄ່າການບໍລິການເຂົ້າຊົມ, ຄ່າການຖ່າຍທຳ ເພື່ອຈຸດປະສົງທາງການຄ້າ ແລະ ຄ່າການຄົ້ນຄວ້າ ວິໄຈມໍລະດົກແຫ່ງຊາດ;

3. ພັນທະຈາກພາກສ່ວນຕ່າງໆທີ່ດຳເນີນກິດຈະການ ຊຶ່ງຕິດພັນກັບມໍລະດົກແຫ່ງຊາດ;

4. ການປະກອບສ່ວນ, ການຊ່ວຍເຫຼືອ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

5. ລາຍໄດ້ຈາກການເຄື່ອນໄຫວກິດຈະກຳ ກ່ຽວກັບມໍລະດົກແຫ່ງຊາດ ແລະ ອື່ນໆ.

**ມາດຕາ 71(ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍລະດົກແຫ່ງຊາດ**

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍລະດົກແຫ່ງຊາດ ຕ້ອງລວມສູນຜ່ານປະຕູດຽວ, ຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້, ສອດຄ່ອງກັບຈຸດປະສົງ ທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້, ຖືກຕ້ອງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ລະບຽບການລະອຽດກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນດັ່ງກ່າວ ໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 72(ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ທຳລາຍພະພຸດທະຮູບ, ບູຮານສະຖານ, ປູສະນີຍະສະຖານ, ສະຖານທີ່ປະຫວັດສາດ, ບຸກຍຶດ, ຈັບຈອງ ທີ່ດິນເຂດອະນຸລັກມໍລະດົກແຫ່ງຊາດ, ປ່ຽນແປງສະຖານະພາບເດີມ ຂອງມໍລະດົກ ໄປສູ່ສະຖານະພາບອື່ນ, ບິດເບືອນເນື້ອໃນປະຫວັດສາດ;

2. ສຳປະທານມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດລະດັບຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳໃຊ້ເຂດມໍລະດົກແຫ່ງຊາດ ເຊັ່ນ ມໍລະດົກສະຖານ, ສະຖານທີ່ປະຫວັດສາດ ເຂົ້າໃນເປົ້າໝາຍໃດໜຶ່ງທີ່ຈະພາໃຫ້ປ່ຽນແປງສະຖານະພາບເດີມ;

4. ຈົດກ່າຍ, ລອກແບບ ເອົາຜົນງານການຄົ້ນຄວ້າ, ປະດິດແຕ່ງຂອງຜູ້ອື່ນ ກ່ຽວກັບມໍລະດົກແຫ່ງຊາດ ມາເປັນລິຂະສິດຂອງຕົນ ຫຼື ພິມເຜີຍແຜ່ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງລິຂະສິດ ແລະ ພາກສ່ວນທີ່ກ່ຽວຂ້ອງ;

5. ທຳລາຍປ່າສະຫງວນແຫ່ງຊາດ ຫຼື ຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ໜ້າດິນ, ໃຕ້ດິນ, ໃຕ້ນ້ຳ, ໃນເຂດມໍລະດົກແຫ່ງຊາດ, ບຸກຍຶດ, ຈັບຈອງທີ່ດິນເຂດປົກປັກຮັກສາ ຊີວະນາໆພັນ, ສວນອຸດທິຍານ ແລະ ເຂດທິວທັດທຳມະຊາດ ລວມທັງ ການປ່ຽນແປງສະຖານະພາບເດີມຂອງມໍລະດົກແຫ່ງຊາດ;

6. ນຳເຂົ້າ, ຈຳໜ່າຍ ແລະ ເຜີຍແຜ່ ຜະລິດຕະພັນທາງດ້ານວັດທະນະທຳ ຂອງຕ່າງປະເທດທີ່ເປັນວັດຖຸ ໂດຍສະເພາະພະພຸດທະຮູບ ຫຼື ບໍ່ເປັນວັດຖຸ ທີ່ບໍ່ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 73(ໃໝ່) ຂໍ້ຫ້າມສຳລັບພະນັກງານທີ່ຮັບຜິດຊອບວຽກງານ ມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ**

ຫ້າມພະນັກງານທີ່ຮັບຜິດຊອບວຽກງານ ມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ສິດໜ້າທີ່ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວ ຈາກວຽກງານມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ;

2. ສວຍໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ໃຫ້ເກີດຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ ຊຶ່ງການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ;

5. ປອມແປງເອກະສານ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ;

6. ດຳເນີນ ຫຼື ເຂົ້າຮ່ວມທຸລະກິດ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ໃນທຸກຮູບແບບ;

7. ທຳລາຍຂໍ້ມູນຫຼັກຖານ, ປົດບັງ ເຊື່ອງອຳລາຍຮັບ , ໃຫ້ ຫຼື ຮັບ, ທວງເອົາ, ຂໍເອົາສິນບົນ, ສົມຮູ້ຮ່ວມຄິດກັບບຸກຄົນອື່ນ ແລະ ຊຸກເຊື່ອງການກະທຳຜິດທີ່ຕິດພັນກັບວຽກງານມໍລະດົກແຫ່ງຊາດ ແລະ ຫໍພິພິທະພັນ;

8. ປ່ຽນແທນ, ປ່ຽນເອົາ ວັດຖຸ, ຍຶດເອົາເຂດມໍລະດົກແຫ່ງຊາດ;

9. ໂຄສະນາ ບິດເບືອນຄວາມຈິງ ກ່ຽວກັບເນື້ອໃນ, ຂອບເຂດການເຄື່ອນໄຫວ, ການຊື້ຂາຍ ວັດຖຸພັນ, ຜະລິດຕະພັນ ກ່ຽວກັບມໍລະດົກແຫ່ງຊາດ;

10. ເກັບຄ່າທຳນຽມ, ຄ່າບໍລິການບໍ່ຖືກຕ້ອງຕາມລະບຽບການ;

11. ກ່າຍ, ລອກແບບ, ຈຳລອງ ວັດຖຸພັນ, ຜະລິດຕະພັນ ກ່ຽວກັບມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

12. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 74( ໃໝ່) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ໝິ່ນປະໝາດ, ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນຕໍ່ພະນັກງານທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ພັກພວກ ທີ່ພົວພັນກັບວຽກງານມໍຣະດົກແຫ່ງຊາດ;

2. ດຳເນີນທຸລະກິດອອກແບບມໍຣະດົກແຫ່ງຊາດ ດ້ວຍຕົນເອງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງ;

4. ປະຕິເສດການສະໜອງຂໍ້ມູນ, ຮ່ວມມືໃນການປົກປັດ ແລະ ແກ່ຍາວການຄົ້ນຄວ້າວຽກງານມໍຣະດົກແຫ່ງຊາດ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

***ມາດຕາ 75(ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ***

ຂໍ້ຂັດແຍ່ງກ່ຽວກັບມໍຣະດົກແຫ່ງຊາດ ສາມາດແກ້ໄຂ ດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

***ມາດຕາ 76(ໃໝ່) ການປະນີປະນອມ ຫຼື ການໄກ່ເກ່ຍ***

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ຄູ່ກໍລະນີ ສາມາດແກ້ໄຂດ້ວຍການປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 77(ໃໝ່) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ຄູ່ກໍລະນີ ສາມາດສະເໜີຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພິຈາລະນາຕາມລະບຽບກົດໝາຍ.

**ມາດຕາ 78(ໃໝ່) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ຄູ່ກໍລະນີ ສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 79(ໃໝ່) ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ຄູ່ກໍລະນີ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອຕັດສິນຄະດີ ຕາມລະບຽບກົດໝາຍ.

**ມາດຕາ 80(ໃໝ່) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ X
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ

**ມາດຕາ 81(ປັບປຸງ) ອົງການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ**

ລັດຖະບານ ຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ມີ ດັ່ງນີ້:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

ໃນກໍລະນີທີ່ມີຄວາມຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການລະດັບຊາດ ເພື່ອມໍຣະດົກໂລກ, ຄະນະກຳມະການມໍຣະດົກລະດັບທ້ອງຖິ່ນ, ພະແນກ ຫຼື ຫ້ອງການມໍຣະດົກໂລກ ສຳລັບແຂວງທີ່ມີມໍຣະດົກແຫ່ງຊາດ ຊຶ່ງໄດ້ຮັບການຮັບຮອງເປັນມໍຣະດົກໂລກ ຂຶ້ນກໍໄດ້.

**ມາດຕາ 82(ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງຮ່າງນະໂຍບາຍ, ແຜນຍຸດທະສາດ, ຮ່າງກົດໝາຍກ່ຽວກັບມໍຣະດົກແຫ່ງຊາດ ເພື່ອສະເໜີລັດຖະບານພິຈາລະນາ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ລະບຽບກົດໝາຍກ່ຽວກັບ ວຽກງານມໍຣະດົກແຫ່ງຊາດ;

3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍຣະດົກແຫ່ງຊາດ;

4. ຊີ້ນຳການສຳຫຼວດ, ເກັບກຳຂໍ້ມູນ, ວິໄຈ, ຂຸດຄົ້ນມໍຣະດົກແຫ່ງຊາດແຕ່ລະປະເພດ;

5. ຮັບຜິດຊອບໂດຍກົງຕໍ່ມໍຣະດົກລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ;

6. ຊີ້ນຳ, ຊຸກຍູ້, ຕິດຕາມ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

7. ຂຶ້ນທະບຽນ ແລະ ອອກອະນຸຍາດກ່ຽວກັບວຽກງານມໍຣະດົກແຫ່ງຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

8. ສ້າງ, ບຳລຸງ, ຝຶກອົບຮົມ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

10.ສະຫຼຸບ ລາຍງານ ແລະ ປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ຕໍ່ລັດຖະບານຢ່າງເປັນປົກກະຕິ;

11.ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 83(ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ລະບຽບກົດໝາຍ, ແຜນການ, ໂຄງການຂອງກະຊວງມາເປັນລະບຽບການ, ແຜນການ, ໂຄງການຂອງຕົນ ແລ້ວຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍຣະດົກແຫ່ງຊາດ;

4. ສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

5. ຂຶ້ນທະບຽນ ແລະ ອອກອະນຸຍາດກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

6. ຊີ້ນຳ, ຊຸກຍູ້ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ຕາມການມອບໝາຍ;

9. ສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ແລ້ວລາຍງານ ຕໍ່ຂັ້ນເທິງຂອງຕົນ;

10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 84 ສິດ ແລະ ໜ້າທີ່ຂອງ ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍຣະດົກແຫ່ງຊາດ;

4. ສຳຫຼວດ, ເກັບກຳຂໍ້ມູນ, ຂຶ້ນບັນຊີກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

5. ໃຫ້ຄວາມເຫັນກ່ຽວກັບການອະນຸຍາດ ໃຫ້ດຳເນີນວຽກງານມໍຣະດົກແຫ່ງຊາດ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

7. ສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ແລ້ວລາຍງານ ຕໍ່ຂັ້ນເທິງຂອງຕົນ;

8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 85(ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ປະຕິສັງຂອນ, ນຳໃຊ້ ແລະ ຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ສຳຫຼວດ, ຂຶ້ນບັນຊີມໍລະດົກແຫ່ງຊາດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ;

3. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ຕໍ່ຂັ້ນເທິງຂອງຕົນ.

**ມາດຕາ 86(ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ຂະແໜງການອື່ນ ເປັນຕົ້ນ ຂະແໜງການໂຍທາທິການ ແລະ ຂົນສົ່ງ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂະແໜງການພາຍໃນ , ອົງການພຸດທະສາສະໜາ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ມີສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານມໍລະດົກແຫ່ງຊາດ

**ມາດຕາ 87(ປັບປຸງ) ອົງການກວດກາວຽກງານມໍລະດົກແຫ່ງຊາດ**

ອົງການກວດກາວຽກງານມໍລະດົກແຫ່ງຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ທີ່ໄດ້ກຳ ນົດໄວ້ໃນມາດຕາ 81 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

ອົງການກວດກາວຽກງານມໍລະດົກແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ງົບປະມານ, ແຜນການ, ໂຄງການ, ລະບຽບກົດໝາຍກ່ຽວກັບວຽກງານມໍລະດົກແຫ່ງຊາດ ລວມທັງສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ກວດກາການແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານມໍລະດົກແຫ່ງຊາດ;

3. ສະເໜີໃຫ້ເປົ້າໝາຍທີ່ຖືກກວດກາ ແກ້ໄຂ, ປັບປຸງ, ປ່ຽນແປງ ການປະຕິບັດໜ້າທີ່ຂອງຕົນໃຫ້ຖືກຕ້ອງ;

4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 88 ຮູບການກວດກາ**

ການກວດກາວຽກງານ ມໍລະດົກແຫ່ງຊາດ ມີ ສາມ ຮູບການ ຄື:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 89(ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາມໍລະດົກແຫ່ງຊາດ ຈະໄດ້ຮັບການຍ້ອງຍໍສັນລະເສີນ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ຜູ້ມີຜົນງານໃນການພົບເຫັນ, ພົບພໍ້, ຄົ້ນຄວ້າ ຫຼື ໃຫ້ຂໍ້ມູນ ທີ່ເປັນປະໂຫຍດ ກ່ຽວກັບມໍລະດົກແຫ່ງຊາດນັ້ນ ນອກຈາກຈະໄດ້ຮັບນະໂຍບາຍ ຕາມວັກທີໜຶ່ງເທິງນີ້ແລ້ວ ຍັງຈະໄດ້ຮັບຜົນປະໂຫຍດອື່ນ ຕາມລະບຽບກົດໝາຍ.

**ມາດຕາ 90(ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

# ພາກທີ XII
# ບົດບັນຍັດສຸດທ້າຍ

**ມາດຕາ 91 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 92 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບເລກທີ 08/ສພຊ ລົງວັນທີ 09 ພະຈິກ 2005.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້